ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 122 /ນຍ

ນະຄອນຫລວງວຽງຈັນ, ວັນທີ 03-04-2018

ກະຊວງການເງິນ
ເລກຮັບ
ເວລາ.........
ວັນທີເຂົ້າ 5.4.18
ເລກທີເຂົ້າ 3772.
ສົ່ງເຖິງ ທກ

# ດຳລັດ

## ວ່າດ້ວຍການປະກາດໃຊ້ສາລະບານອັດຕາພາສີລະບົບເອກະພາບ ຂອງອາຊຽນ ລຸ້ນປີ 2017 (AHTN 2017)

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍ ວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍ ວ່າດ້ວຍພາສີ ສະບັບປັບປຸງ ບາງມາດຕາ ສະບັບເລກທີ 57/ສພຊ, ລົງວັນທີ 16 ມັງກອນ 2014;
- ອີງຕາມໜັງສືສະເໜີ ສະບັບເລກທີ 3416/ກງ, ລົງວັນທີ 13 ທັນວາ 2017 ຂອງກະຊວງການເງິນ;
- ອີງຕາມເອກະສານລາຍງານ ສະບັບເລກທີ 521/ຕປທ, ລົງວັນທີ 24 ມັງກອນ 2018 ຂອງກະຊວງການຕ່າງປະເທດ.

## ນາຍົກລັດຖະມົນຕີ ອອກດຳລັດ :

**ມາດຕາ 1** : ປະກາດໃຊ້ສາລະບານອັດຕາພາສີລະບົບເອກະພາບ ຂອງອາຊຽນ ລຸ້ນປີ 2017 (AHTN 2017) ເພື່ອປ່ຽນແທນສາລະບານອັດຕາພາສີລະບົບເອກພາບ ຂອງອາຊຽນ ລຸ້ນປີ 2012 (AHTN 2012) ທີ່ປະກາດໃຊ້ໂດຍ ດຳລັດ ສະບັບເລກທີ 08/ນຍ, ລົງວັນທີ 10 ມັງກອນ 2013.

**ມາດຕາ 2** : ສາລະບານອັດຕາພາສີລະບົບເອກະພາບ ຂອງອາຊຽນ ລຸ້ນປີ 2017 (AHTN 2017) ປະກອບມີ 21 ພາກ, 97 ໝວດ, 1.222 ລະຫັດເຄົ້າ (04 ຕົວເລກ), 5.387 ລະຫັດຍ່ອຍ (06 ຕົວເລກ) ແລະ 10.813 ລະຫັດຍ່ອຍ (08 ຕົວເລກ).

**ມາດຕາ 3** : ມອບໃຫ້ກະຊວງການເງິນ ອອກແຈ້ງການຈັດຕັ້ງປະຕິບັດ ພ້ອມທັງອອກບົດແນະນຳລະອຽດ ກ່ຽວກັບການນຳໃຊ້ສາລະບານອັດຕາພາສີລະບົບເອກະພາບ ຂອງອາຊຽນ ລຸ້ນປີ 2017 (AHTN 2017) ເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບຫຼັກການຂອງສາກົນ ແລະ ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

**ມາດຕາ 4** : ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ — ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ